ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 10 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 11 ມີນາ 2019


ສໍານັກງານ ຄຄຊ
ເລກທີ 0236
ວັນທີ 12 MAR 2019
ໂທລະສັບ 021 217770


# ບົດລາຍງານ

## ການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ

## ປະຈໍາອາທິດທີ 18-22/02/2019 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

**I. ວຽກງານການເມືອງແນວຄິດ**

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນໍາພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

**II. ການເຄື່ອນໄຫວວຽກງານວິຊາສະເພາະ**

**1. ສະພາບເສດຖະກິດເງິນຕາສາກົນ**

**1.1 ອັດຕາແລກປ່ຽນສາກົນ**

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດອ່ອນຄ່າລົງ 0,49% ທຽບໃສ່ເອີໂຣ ເນື່ອງຈາກເສດຖະກິດຂອງສະຫະລັດອາເມລິກາອອກມາບໍ່ດີ ຕົວເລກດັດຊະນີຜູ້ຈັດການຝ່າຍຊື້ຂອງຂະແໜງການຜະລິດຂອງສະຫະລັດອາເມລິກາ ຫຼຸດລົງຢູ່ໃນລະດັບ 53,7 ຈຸດ ໃນເດືອນ 02/2019 ຈາກລະດັບ 54,9 ຈຸດ ໃນເດືອນຜ່ານມາ. ພ້ອມກັນນັ້ນ, ຕົວເລກຍອດຂາຍບ້ານປະຈໍາເດືອນ ຫຼຸດລົງ 1,2% ໃນເດືອນ 01/2019 ຈາກທີ່ຫຼຸດລົງ 4,0 ໃນເດືອນຜ່ານມາ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 11-15/02/2019 | ອາທິດນີ້ 18-22/02/2019 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1,1287 | 1,1343 | -0,49% |
| ເຢນ/ໂດລາ | 110,39 | 110,83 | -0,40% |
| ບາດ/ໂດລາ | 31,280 | 31,350 | -0,22% |
| ເປໂຊ/ໂດລາ | 52,38 | 52,17 | 0,41% |
| ຣູເປັຍ/ໂດລາ | 14.145,00 | 14.060,00 | 0,60% |
| ໂດລາສິງກະໂປ/ໂດລາ | 1,3587 | 1,3531 | 0,41% |
| ຢວນ/ໂດລາ | 6,7787 | 6,7225 | 0,84% |

### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

- ລາຄານ້ຳມັນ ເພີ່ມຂຶ້ນ 4,32% ເປັນ 58,93 ໂດລາ/ບາເຣວ ເນື່ອງຈາກຄວາມຕ້ອງການຊົມໃຊ້ນ້ຳມັນເພີ່ມຂຶ້ນຊຶ່ງເຫັນໄດ້ຈາກຄັງສຳຮອງນ້ຳມັນແອັດຊັງຂອງ ສະຫະລັດອາເມລິກາ ຫຼຸດລົງ 1,45 ລ້ານບາເຣວ ໃນອາທິດທີ 15/02/2019 ຈາກເພີ່ມຂຶ້ນ 0,41 ລ້ານບາເຣວ ໃນອາທິດຜ່ານມາ. ພ້ອມກັນນັ້ນ, ລາຄານ້ຳມັນດິບຍັງໄດ້ຮັບແຮງກົດດັນຈາກການຮ່ວມມືກັນຂອງກຸ່ມໂອເປັກ ແລະ ປະເທດພັນທະມິດພ້ອມດ້ວຍປະເທດຣັດເຊຍ ໃນການປັບຫຼຸດກຳລັງການຜະລິດນ້ຳມັນດິບ ເພື່ອປ້ອງກັນການເພີ່ມຂຶ້ນຂອງອຸປະທານນ້ຳມັນດິບໃນຕະຫຼາດ;
- ລາຄາຄຳ ເພີ່ມຂຶ້ນ 0,53% ເປັນ 1.323,12 ໂດລາ/ອອນ ເນື່ອງຈາກເງິນໂດລາອ່ອນຄ່າ ເຮັດໃຫ້ນັກລົງທຶນເຂົ້າຊື້ຄຳ ແລະ ສັນຍາຊື້-ຂາຍຄຳ ເພື່ອປ້ອງກັນຄວາມສ່ຽງ.

## 2. ສະພາບການຊື້-ຂາຍອັດຕາແລກປ່ຽນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາ ອ່ອນຄ່າລົງ 0,08% ແລະ ອ່ອນຄ່າລົງ 0,43% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າເງິນກີບອ່ອນຄ່າລົງ 0,04% ທຽບໃສ່ສະກຸນເງິນໂດລາ ແລະ ອ່ອນຄ່າລົງ 3,96% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 11-15/02/2019 | | | ອາທິດນີ້ 18-22/02/2019 | | | %ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະນາຄານ[1] | | | | | | | | | | | | |
| ໂດລາ | 8.597,65 | 8.626,34 | 8.601,76 | 8.602,54 | 8.632,19 | 8.617,82 | -0,06% | -0,07% | -0,08% | -0,01% | -0,05% | -0,04% |
| ບາດ | 275,54 | 277,46 | 276,82 | 276,60 | 278,55 | 278,02 | -0,38% | -0,39% | -0,43% | -3,76% | -3,98% | -3,96% |

### 2.2 ສະພາບຖານເງິນຕາແລະປະລິມານເງິນ M2

- ຖານເງິນຕາປະຈຳອາທິດນີ້ ຫຼຸດລົງ 0,11% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ຖານເງິນຕາ ເພີ່ມຂຶ້ນ 15,02%;
- ປະລິມານເງິນ M2 ຫຼຸດລົງ 0,4% ທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 9,71%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (15-21/02/2019) ເຫັນວ່າ ທທກ ຂາຍເງິນໂດລາສຸດທິ 2,24 ລ້ານໂດລາ (ໃນນີ້ຊື້ເງິນໂດລາໄດ້ 30,34 ລ້ານໂດລາ ແລະ ຂາຍເງິນໂດລາໄດ້ 32,58 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 432,58 ລ້ານບາດ (ໃນນີ້ຊື້ເງິນບາດໄດ້ 210,29 ລ້ານບາດ ແລະ ຂາຍເງິນບາດໄດ້ 642,87 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາ ເຫັນວ່າເງິນໂດລາ ເພີ່ມຂຶ້ນ 14,44% ແລະ ເງິນບາດ ເພີ່ມຂຶ້ນ 7,75%;
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ດູດຊຶມໂດຍການຊື້ເງິນໂດລາສຸດທິຈາກທະນາຄານທຸລະກິດ ຈຳນວນ 2,60 ລ້ານໂດລາ ແຕ່ ຂາຍເງິນບາດສຸດທິໃຫ້ທະນາຄານທຸລະກິດ ຈຳນວນ 22,50 ລ້ານບາດ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ມີປະລິມານຊື້-ຂາຍເງິນໂດລາ ຈຳນວນ 6,33 ລ້ານໂດລາ ແລະ ເງິນບາດ ຈຳນວນ 121,20 ລ້ານບາດ;

[1]% ການປ່ຽນແປງຂອງອັດຕາແລກປ່ຽນທະນາຄານທຸລະກິດ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ

- ການຊື້-ຂາຍລະຫວ່າງ ທຫລ ກັບພາກສ່ວນອື່ນໆ: ທຫລ ໄດ້ຂາຍເງິນໂດລາສຸດທິ ຈຳນວນ 1,67 ລ້ານໂດລາ ແລະ ຂາຍເງິນບາດສຸດທິ ຈຳນວນ 137,87 ລ້ານບາດ.

ສະພາບການຊື້-ຂາຍເງິນຕາຕ່າງປະເທດ (ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 08-14/02/2019 | | ອາທິດນີ້ 15-21/02/2019 | | (%) +ເພີ່ມຂຶ້ນ/-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| **1. ການຊື້ເງິນຕາຕ່າງປະເທດ** | **32,70** | **169,36** | **30,34** | **210,29** | **-7,27%** | **24,17%** |
| - ທ/ຄທຸລະກິດລັດ | 15,15 | 42,07 | 14,06 | 58,70 | -7,32% | 39,53% |
| - ທ/ຄທຸລະກິດອື່ນໆ | 17,55 | 127,29 | 16,28 | 151,59 | -7,24% | 19,09% |
| **2. ການຂາຍເງິນຕາຕ່າງປະເທດ** | **22,23** | **622,41** | **32,58** | **642,87** | **46,36%** | **3,29%** |
| - ທ/ຄທຸລະກິດລັດ | 8,37 | 346,22 | 13,85 | 216,61 | 64,88% | -37,44% |
| - ທ/ຄທຸລະກິດອື່ນໆ | 13,86 | 276,19 | 18,73 | 426,26 | 35,14% | 54,34% |
| **ຊື້-ຂາຍສຸດທິ ທທກ** | **10,47** | **-453,05** | **-2,24** | **-432,58** | **-121,41%** | **-4,52%** |
| - ຜິດດ່ຽງຊື້-ຂາຍ | 32,02% | -267,51% | -7,38% | -205,71% | -123,09% | -23,10% |
| **- ມູນຄ່າການຊື້-ຂາຍ** | **54,93** | **791,77** | **62,92** | **853,16** | **14,44%** | **7,75%** |
| **3. ການຊື້-ຂາຍ ລະຫວ່າງ ທຫລ ກັບ ທທກ** | **-5,27** | **-10,10** | **2,60** | **-22,50** | | |
| - ທຫລ ຊື້ຈາກ ທທກ | 0,00 | 0,00 | 6,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 45,27 | 10,10 | 3,40 | 22,50 | | |
| **4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ** | **1,28** | **82,40** | **6,33** | **121,20** | | |
| **5. ທຫລ ກັບ ພາກສ່ວນອື່ນໆ** | **0,00** | **0,00** | **-1,67** | **-137,87** | | |
| -ທຫລ ຊື້ຈາກພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |
| -ທຫລ ຂາຍໃຫ້ພາກສ່ວນອື່ນໆ | 0,00 | 0,00 | 1,67 | 137,87 | | |

**2.4 ສະພາບອັດຕາເງິນເຟີ້**

ອັດຕາເງິນເຟີ້ໃນເດືອນ 02/2019 ຄາດວ່າຈະຢູ່ໃນລະດັບ 1,38%.

**2.5 ການຄຸ້ມຄອງເງິນຕາຕ່າງປະເທດ**

ທະນາຄານແຫ່ງ ສປປ ລາວ ໄດ້ມີກະແສເງິນໄຫຼອອກສຸດທິ ຜ່ານລະບົບທະນາຄານ ຈຳນວນ 54,93 ລ້ານໂດລາສະຫະລັດ. ໃນນັ້ນ, ປະຈຳອາທິດວັນທີ (15-21/02/2019) ໃນນັ້ນ, ກະແສເງິນໄຫຼອອກ ມີຈຳນວນ 125,46 ລ້ານໂດລາສະຫະລັດ (ຊຶ່ງສ່ວນໃຫຍ່ແມ່ນຊຳລະຄ່ານຳເຂົ້າສິນຄ້າ ຈຳນວນ 97,19 ລ້ານໂດລາສະຫະລັດ, ຊຳລະເງິນກູ້ພາກລັດຖະບານ ຈຳນວນ 16,60 ລ້ານໂດລາສະຫະລັດ ແລະ ຊຳລະຄ່າບໍລິການ ຈຳນວນ 7,94 ລ້ານໂດລາສະຫະລັດ). ກະແສເງິນໄຫຼເຂົ້າ ມີຈຳນວນ 70,53 ລ້ານໂດລາສະຫະລັດ (ຊຶ່ງສ່ວນໃຫຍ່ແມ່ນຮັບຈາກການສົ່ງອອກສິນຄ້າ ຈຳນວນ 50,19 ລ້ານໂດລາສະຫະລັດ, ຮັບຈາກການໃຫ້ບໍລິການ ຈຳນວນ 12,13 ລ້ານໂດລາສະຫະລັດ ແລະ ລາຍຮັບອື່ນໆ ຈຳນວນ 5,28 ລ້ານໂດລາສະຫະລັດ).

**3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ**

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ຈຳນວນ 743 ສະບັບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 114 ສະບັບ , ລວມມູນຄ່າໂອນທັງໝົດ 301,21 ຕື້ກີບ, ທຽບໃສ່ອາທິດຜ່ານມາ ຫຼຸດລົງ 78,55 ຕື້ກີບ ເທົ່າກັບ 20,68%.

- ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (15-21/02/2019) ມີທັງໝົດ 3.825 ຄັ້ງ ເຊິ່ງປະກອບມີດັ່ງນີ້:

- **ສະກຸນເງິນກີບ:** ມີການເຄື່ອນໄຫວຈຳນວນ 3.791 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ ຫຼຸດລົງ ຈຳນວນ 410 ຕື້ກີບ ຈາກ 1.610,84 ຕື້ກີບ ມາເປັນ 1.200,47 ຕື້ກີບ ເທົ່າກັບ 25,47%;
- **ກະຊວງການເງິນ:** ການເຄື່ອນໄຫວຂອງກະຊວງການເງິນມີການໂອນເງິນຈຳນວນ 34 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ ຫຼຸດລົງ ຈຳນວນ 168,30 ຕື້ກີບ ຈາກ 202,54 ຕື້ກີບ ມາເປັນ 34,24 ຕື້ກີບ ເທົ່າກັບ 83,09%.

**4. ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ**

ດັດຊະນີຕະຫຼາດຫຼັກຊັບລາວໃນອາທິດນີ້ປິດຢູ່ທີ່ 803,29 ຈຸດ ຫຼຸດລົງ ຈາກ 820.26 ຈຸດ ຫຼື ເທົ່າກັບ 2,07% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດນີ້ ມີປະລິມານຊື້-ຂາຍຮຸ້ນທັງໝົດ 167,500 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 713,421 ລ້ານກີບ ຫຼຸດລົງ 25,16% ເມື່ອທຽບໃສ່ອາທິດຜ່ານມາ, ໃນນັ້ນ ເປັນການຊື້-ຂາຍຮຸ້ນຂອງຜູ້ລົງທຶນຕ່າງປະເທດ ກວມເອົາ 61,13%. ສາເຫດການຫຼຸດລົງຂອງດັດຊະນີ ຕລຊລ ແມ່ນມາຈາກການປັບຕົວຫຼຸດລົງຂອງລາຄາຮຸ້ນ PTL, LWPC ແລະ PCD.

**ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)**

| ບໍລິສັດ | ອາທິດກ່ອນ(08-14/02/2019) | | | ອາທິດນີ້(15-21/02/2019) | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈຳນວນ | ມູນຄ່າການຊື້-ຂາຍ | ລາຄາປ່ຽນແປງ (%) |
| **BCEL** | 125.900 | 737.990.000 | 5.850 | **74.400** | **440.010.000** | **5.900** | **-40,91** | **-40,38** | **0,85** |
| **EDL-GEN** | 39.300 | 155.007.000 | 3.940 | **12.000** | **46.879.000** | **3.910** | **-69,47** | **-69,76** | **(0,76)** |
| **LWPC** | - | - | 7.950 | - | - | **7.150** | - | - | **-10,06** |
| **PTL** | 600 | 660.000 | 1.100 | **4.200** | **3.402.000** | **810** | **600** | **415,45** | **-26,36** |
| **SVN** | - | - | 2.000 | - | - | **2.000** | - | - | - |
| **PCD** | 300 | 342.000 | 1.140 | **1.100** | **1.133.000** | **1.030** | **266,67** | **231,29** | **-9,65** |
| **LCC** | - | - | 2.350 | - | - | **2.350** | - | - | - |
| **MHTL** | 21.400 | 59.641.000 | 2.800 | **75.100** | **221.490.000** | **2.950** | **250,93** | **271,37** | **5,36** |
| **LAT** | - | - | 750 | **700** | **507.500** | **725** | - | - | **-3,33** |
| ທັງໝົດ | 187.500 | 953.640.000 | | **167.500** | **713.421.500** | | **-10,67** | **-25,19** | |

**5. ວຽກງານອື່ນໆທີ່ພົ້ນເດັ່ນ.**

- **ສຳເລັດການເຂົ້າຮ່ວມກອງປະຊຸມ:** ❶ ກອງປະຊຸມລັດຖະບານ ສະໄໝສາມັນ ປະຈຳເດືອນ ກຸມພາ 2019; ❷ ກອງປະຊຸມການຄຸ້ມຄອງຄວາມສ່ຽງຂອງວຽກງານ AML/CFT ສຳລັບຂະແໜງການເງິນ ແລະ ສະຖາບັນທີ່ບໍ່ນອນໃນຂະແໜງການເງິນສຳລັບ ສປປ ລາວ;
- **ສຳເລັດການຈັດກອງປະຊຸມ, ສຳມະນາ ແລະ ພິທີຕ່າງໆ:** ❶ ກອງປະຊຸມຄະນະປັບປຸງດັດແກ້ສັນຍາຮ່ວມທຶນລະຫວ່າງ ທະນາຄານແຫ່ງ ສປປ ລາວ ແລະ ຕະຫຼາດຫຼັກຊັບເກົາຫຼີ; ❷ ກອງປະຊຸມປຶກສາຫາລືການກຳນົດສິດນຳໃຊ້ເວບໄຊສ ໃໝ່ຂອງ ທຫລ; ❸ ກອງປະຊຸມສຳມະນາ ເຜີຍແຜ່ວິທີການປະເມີນ ແລະ ການນຳໃຊ້ຕົວຊີ້ວັດເສດຖະກິດມະຫາພາກ ແລະ ການປະເມີນວິເຄາະຖານຂໍ້ມູນເສດຖະກິດ; ❹ ຈັດສຳມະນາລະດັບສູງຮ່ວມກັບທະນາຄານແຫ່ງປະເທດໄທ ໃນຫົວຂໍ້: "ພາວະຄວາມເປັນຜູ້ນຳ ແລະ ການສື່ສານ"; ❺ ຈັດພິທີປາຖະກະຖາເລີ່ມມູນ

ເຊື່ອວັນສ້າງຕັ້ງກຳມະບານ ຄົບຮອບ 63 ປີ ແລະ ❻ ເດີນທາງໄປຖອດຖອນບົດຮຽນກ່ຽວກັບວຽກງານຄຸ້ມຄອງມະຫາພາກ ທາງດ້ານສິນເຊື່ອ ແລະ ວຽກນະໂຍບາຍສິນເຊື່ອເພື່ອສົ່ງເສີມ SMEs ຢູ່ສປ ຈີນ;

- **ສຳເລັດວຽກງານວິຊາການອື່ນໆ:** ❶ ປະກາດການຈຳໜ່າຍພັນທະບັດກະຊວງການເງິນເພື່ອດຸ່ນດ່ຽງງົບປະມານ ປະຈຳປີ 2019; ❷ ສຳເລັດການປຶກສາຫາລືຮ່ວມກັບທະນາຄານພັດທະນາແຫ່ງຊາດຈີນ ກ່ຽວກັບການກະກຽມເຈລະຈາຮ່າງສັນຍາເງິນກູ້ 100 ລ້ານໂດລາ;❸ ສຳເລັດການລົງກວດກາສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ 02 ແຫ່ງຄື: ດອກຄູນ ແລະ ເອກພັດທະນາ ປະຈຳປີ 2018;❹ ຈັດກິດຈະກຳ "ສອນນ້ອງສ້າງອອມ" ຮ່ວມກັບໂຄງການ AFP ແລະ ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, ມະຫາວິທະຍາໄລແຫ່ງຊາດ;❺ ສາເລັດການລົງກວດກາທະນາຄານທຸລະກິດ 02 ແຫ່ງຄື: ທະນາຄານກຸງເທບ ຈຳກັດ ສາຂານະຄອນຫຼວງວຽງຈັນ ແລະ ທະນາຄານພາບລິກ ສາຂາວັດໄຕ ແລະ ❻ ສາເລັດການຈັດຕັ້ງປະຕິບັດຕາມມາດຕະການປັບໃໝຕໍ່ບໍລິສັດຈົດທະບຽນ 01 ແຫ່ງເນື່ອງຈາກການເປີດເຜີຍຂໍ້ມູນຊ້າ.

**III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>**

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນທີ່ໄດ້ກຳນົດໄວ້ໃນແຜນວຽກປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ສືບຕໍ່ຈັດຕັ້ງປະຕິບັດ 08 ມາດຕະການຊຸກຍູ້ເສດຖະກິດທີ່ຕິດພັນກັບ ທຫລ;
- ສືບຕໍ່ຕິດຕາມ, ກວດກາການເຄື່ອນໄຫວຂອງບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ທີ່ໄດ້ຮັບອະນຸຍາດຈາກ ທຫລ ພ້ອມທັງສືບຕໍ່ຮ່ວມເປັນຄະນະສະເພາະກິດລົງກວດກາການເຄື່ອນໄຫວຮ້ານແລກປ່ຽນເງິນຕາ ຢ່າງໃກ້ຊິດ;
- **ການເຂົ້າຮ່ວມກອງປະຊຸມ:**❶ ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ເພື່ອຜ່ານຮ່າງກົດໝາຍວ່າດ້ວຍທະນາຄານທຸລະກິດ (ສະບັບປັບປຸງ);❷ ກອງປະຊຸມ "ສ້າງຄວາມເຂັ້ມແຂງໃນການຕ້ານອາສະຍະກຳຂ້າມຊາດທີ່ມີການຈັດຕັ້ງ ໂດຍສະເພາະ ບັນຫາຢາເສບຕິດ, ການຄ້າມະນຸດ, ການຟອກເງິນ ແລະ ການປະມວນກົດໝາຍອາຍາ";
- **ການຈັດກອງປະຊຸມ, ສຳມະນາ ແລະ ພິທີຕ່າງໆ:** ❶ ກອງປະຊຸມຮ່ວມກັບຄະນະປັບປຸງຮ່າງດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ທຫລ;❷ ກອງປະຊຸມຜູ້ຖືຮຸ້ນປະຈຳປີ 2018 ຂອງບັນດາບໍລິສັດຈົດທະບຽນ; ❸ ກະກຽມຈັດສຳມະນາເຜີຍແຜ່ຄວາມຮູ້ກ່ຽວກັບວຽກງານຕະຫຼາດທຶນ ໃນຫົວຂໍ້ "ຄວາມເຂົ້າໃຈພື້ນຖານກ່ຽວກັບການລົງທຶນໃນຮຸ້ນ" ແລະ ❹ ກະກຽມເຂົ້າຮ່ວມຝຶກອົບຮົມເພື່ອສ້າງຄວາມເຂົ້າໃຈກ່ຽວກັບ "ການນຳໃຊ້ລະບົບ Assist ຂອງຂະແໜງການຄ້າດ້ານບໍລິການໃນຂອບອາຊຽນ ແລະ ❺ ກອງປະຊຸມສະພາວິຊາການ ສະຖາບັນການທະນາຄານ ສະໄໝສາມັນ ຄັ້ງທີ I ປະຈຳປີ 2019;
- **ກະກຽມຕ້ອນຮັບ:** ຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຈາກຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບແຫ່ງປະເທດໄທ ແລະ ຄະນະຊ່ຽວຊານຈາກອົງການຕິດຕາມຄົ້ນຄວ້າສະພາບເສດຖະກິດມະຫາພາກ ອາຊຽນ +3 AMRO.

ເຊັນແທນຫົວໜ້າຫ້ອງການ

ຮອງຫົວໜ້າຫ້ອງການ

ພູມມະລີ ສີຣິພັນເດດ